# ເງື່ອນໄຂການຍື່ນເອກະສານສົມທຽບລາຄາບໍລິການຫ້ອງປະຊຸມ

**I. ອົງກອນ:** ອົງການແພລນສາກົນ ປະຈໍາ ສປປ ລາວ

**II. ຫົວຂໍ້:** ການບໍລິການຫ້ອງປະຊຸມໃຫ້ແກ່ ອົງການແພລນສາກົນ ປະຈໍາ ສປປ ລາວ **ຢູ່ນະຄອນຫຼວງວຽງຈັນ ແລະ ເມືອງ ວັງວຽງ**.

ໃນການບໍລິການດັ່ງກ່າວນີ້ ຕ້ອງປະກອບດ້ວຍ:

1) ຫ້ອງປະຊຸມ ແລະ ອຸປະກອນຈໍາເປັນໃນຫ້ອງປະຊຸມເຊັ່ນ: ກະດານ, ບິກ, ເຈ້ຍ A4, ເຈ້ຍ A0, ຈໍ LCD, ເຄື່ອງສຽງ, ໄມ ແລະ ນໍ້າດື່ມເປັນຕົ້ນ.
2) ຫ້ອງອາຫານ ແລະ ສາມາດບໍລິການອາຫານຫວ່າງ, ອາຫານສວຍ ຫຼື ອາຫານຄໍ່າໄດ້.
3) ຖ້າທ່ານມີອຸປະກອນເພີ່ມເຕີມເຫຼົ່ານີ້ເຊັ່ນ: ຫູຟັງ, ຫ້ອງແປພາສາ, ຈໍ LED, ການປະຊຸມຜ່ານວີດີໂອ,…ກະລຸນາລະບຸ.

**III. ເອກະສານສໍາລັບສົມທຽບລາຄາ:** ບັນດາໂຮງແຮມ/ຮ້ານອາຫານທີ່ມີຄວາມສົນໃຈເຂົ້າຮ່ວມການສົມທຽບລາຄາບໍລິການຫ້ອງປະຊຸມໃຫ້ແກ່ ອົງການແພລນ ກະລຸນາປະກອບເອກະສານຕາມທີ່ລະບຸຂ້າງລຸ່ມນີ້:

1. ສໍາເນົາ ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດໍາເນີນທຸລະກິດ ທີ່ຍັງໃຊ້ໄດ້ 1 ຊຸດ
2. ສໍາເນົາ ໃບເສຍພາສີອາກອນປະຈໍາປີ 2025 ຫຼື 2026 1 ຊຸດ
3. ສໍາເນົາ ຮູບພາບໂດຍລວມ, ຮູບພາບຫ້ອງປະຊຸມ ແລະ ຫ້ອງອາຫານ 1 ຊຸດ
4. ສໍາເນົາ ເມນູອາຫານ ລວມທັງອາຫານຫວ່າງ 1 ຊຸດ
5. ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ

**ໝາຍເຫດ:** ອົງການແພລນ ສະໜັບສະໜູນ ແລະ ສົ່ງເສີມ ໂຮງແຮມ/ຮ້ານອາຫານ ທີ່ຜູ້ຍິງເປັນເຈົ້າຂອງ, ເປັນຜູ້ບໍລິຫານ ຕົວຢ່າງ ຜູ້ບໍລິຫານສູງສຸດແມ່ນຜູ້ຍິງ ຫຼື ມີພະນັກງານຍິງຈໍານວນຫຼາຍເຮັດວຽກໃນທຸລະກິດຂອງທ່ານ.

**IV. ໃບສະເໜີລາຄາ.**

1. ກະລຸນາຕື່ມລາຄາໃສ່ໃນແບບຟອມ "**ສົມທຽບລາຄາບໍລິການຫ້ອງປະຊຸມ**" ທີ່ທາງອົງການແພລນສະໜອງໃຫ້.
2. ລາຄາທີ່ສະເໜີເປັນສະກຸນເງິນ "ກີບ" ຫຼື ສະກຸນເງິນຕ່າງປະເທດກໍ່ໄດ້ ແຕ່ວ່າການຊໍາລະຈະເປັນສະກຸນເງິນກີບໂດຍອີງໃສ່ອັດຕາແລກປ່ຽນຂອງທະນາຄານ ການຄ້າ.
3. ລາຄາທີ່ບໍ່ປ່ຽນແປງພາຍໃນ 2 ປີ, ອາດຈະມີການທົບທວນເປັນໄລຍະໂດຍອີງໃສ່ສະພາບເສດຖະກິດ ແລະ ມີການເຫັນດີຈາກອົງການແພລນ.

**V. ເງື່ອນໄຂເພີ່ມເຕີມ.**

1. ອົງການແຜລນ ສະຫງວນສິດໃນການຄັດເລືອກ ແລະ ອາດມີການເຊັນສັນຍາຮ່ວມກັບໂຮງແຮມ/ຮ້ານອາຫານທີ່ຍື່ນເອກະສານສົມທຽບລາຄາຫຼາຍກວ່າ 1 ແຫ່ງ ທັງນີ້ທັງນັ້ນແມ່ນຂຶ້ນກັບເງື່ອນໄຂ ແລະ ລາຄາທີ່ທ່ານສະເໜີມາ.
2. ການບໍລິການນີ້ ມີຈຸດປະສົງເປັນການບໍລິການໄລຍະຍາວ 2 ປີ ແລະ ໂຮງແຮມ/ຮ້ານອາຫານທີ່ໄດ້ຮັບຄັດເລືອກໃຫ້ບໍລິການແກ່ອົງການແຜລນແມ່ນຍິນດີທີ່ຈະເຊັນສັນຍາຮ່ວມກັນອົງການແຜລນ ພາຍໃຕ້ລາຄາທີ່ທ່ານສະເໜີມາ.
3. ທ່ານຍິນດີທີ່ຈະໄດ້ຮັບການຊຳລະຄ່າບໍລິການໂດຍຜ່ານການໂອນຜ່ານທະນາຄານ ຫຼື ຮັບແຊັກ ພາຍຫຼັງບໍລິການແລ້ວ.
4. ເອກະສານທັງໝົດທີ່ທ່ານສົ່ງມາເພື່ອເຂົ້າຮ່ວມການສົມທຽບລາຄາ ຈະບໍ່ຖືກສົ່ງກັບຄືນຫາທ່ານ ເຖິງແມ້ວ່າໂຮງແຮມທ່ານຈະຖືກຄັດເລືອກ ຫຼື ບໍ່ ກໍ່ຕາມ.
5. ທ່ານຕ້ອງຕື່ມຂໍ້ມູນໃສ່ **"ແບບສອບຖາມສຳລັບຜູ້ສະໜອງ ຂອງອົງການແຜລນສາກົນ"** ແລະ ສົ່ງຫາອົງການແຜລນ ພ້ອມກັບເອກະສານສົມທຽບລາຄາ.

## VI. ການຍື່ນເອກະສານສົມທຽບລາຄາ.

ກະລຸນາບັນຈຸເອກະສານຂອງທ່ານໃນຊອງທີ່ປິດສະນິດແໜ້ນ ແລະ ຍື່ນເອກະສານຂອງທ່ານມາທີ່ຫ້ອງການ ອົງການແຜລນ ສາກົນ ປະຈຳ ສປປ ລາວຕາມທີ່ຢູ່ຂ້າງລຸ່ມ. **ສຳລັບໂຮງແຮມ ຫຼື ຮ້ານອາຫານຢູ່ເມືອງ ວັງວຽງແມ່ນ ທ່ານສາມາດເລືອກວ່າຈະສົ່ງດ້ວຍວິທີໃດກໍ່ໄດ້ (ທາງອີແມວ ຫຼື ສົ່ງມາຫ້ອງການ).**

## VII. ວັນທີປິດຮັບເອກະສານ.

ມື້ສຸດທ້າຍໃນການຍື່ນເອກະສານສົມທຽບລາຄາແມ່ນບໍ່ໃຫ້ກາຍ **17:00 ໂມງແລງ** ຂອງວັນທີ **11 ກຸມພາ 2026** ຕາມທີ່ຢູ່ດ້ານລຸ່ມ. ຖ້າຫາກກາຍເວລາດັ່ງກ່າວ ເອກະສານຂອງທ່ານຈະບໍ່ຖືກພິຈາລະນາ.

| *ຫ້ອງການອົງການແຜລນປະຈຳນະຄອນຫລວງວຽງຈັນ* |
|---|
| ເຮືອນເລກທີ 203, ໜ່ວຍ 10, ບ້ານ ໂພນສີນວນ, ມ. ສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ<br>ໂທຣ: +856 (0) 21 353 409 -11, ແຟັກ: +856 (0) 21 313 512<br>ອີແມວ: Laos.procurement@plan-international.org., ກະລຸນາກັອບປີ້ Somkhith.Vilasak@plan-international.org |